# ການດູແລສຸຂະພາບສຳລັບຊາວໄອໂອວາ:
## ການຮັບເອົາການປິ່ນປົວສຸກເສີນ



### ຍາມໃດທີ່ໂຮງໝໍຕ້ອງໃຫ້ການປິ່ນປົວແກ່ທ່ານ?

ໂຮງໝໍຕ້ອງໃຫ້ການປິ່ນປົວແກ່ທ່ານ – ເຖິງແມ່ນວ່າທ່ານຈະບໍ່ມີປະກັນພັຍ – ເມື່ອທ່ານຢູ່ໃນສະພາບການສຸກເສີນ ຫລືທ່ານກຳລັງຈະອອກລູກ. ໂຮງໝໍຕ້ອງໃຫ້ການປິ່ນປົວສຸກເສີນແກ່ທ່ານຈົນກວ່າທ່ານຈະຢູ່ໃນສະພາບປົກກະຕິ. ໂຮງໝໍອາດສົ່ງໃບບິນເກັບຄ່ານຳທ່ານພາຍຫລັງ, ແຕ່ໂຮງໝໍຈະບໍ່ສາມາດປະຕິເສດການຊ່ວຍເຫລືອສຸກເສີນແກ່ທ່ານໄດ້.

ຈົ່ງຮຽນຮູ້ເພີ່ມເຕີມກ່ຽວກັບ ສິດທິຂອງທ່ານໃນການຮັບການປິ່ນປົວສຸກເສີນ ທີ່ເວັບໄຊການຊ່ວຍເຫລືອທາງກົດໝາຍຂອງຣັຖໄອໂອວາ* (Iowa Legal Aid Website).

### ທ່ານໝໍຄົນໃດຄົນນຶ່ງຕ້ອງກວດເບິ່ງຂ້າພະເຈົ້າໃນຫ້ອງສຸກເສີນແມ່ນບໍ່?

ກົດໝາຍບອກວ່າ ທ່ານໝໍຕ່າງໆທີ່ຢູ່ນອກຫ້ອງສຸກເສີນ ບໍ່ຈຳເປັນຕ້ອງກວດທ່ານໃນຫ້ອງສຸກເສີນ.

### ມີໂຄງການຊ່ວຍເຫລືອອັນໃດບໍ່ ທີ່ຈະຊ່ວຍຈ່າຍຄ່າໄປຫາໝໍ ຫລືໄປໂຮງໝໍ ໃຫ້ຂ້າພະເຈົ້າໄດ້?

ມີໂຄງການຊ່ວຍເຫລືອຂອງຣັຖບານ ເຊັ່ນວ່າ ໂຄງການເມດິເຄດ (Medicaid) (ພາກທີ 19), ໂຄງການເມດິແຄ (Medicare) ຫລືໂຄງການ hawk-i ເຊິ່ງຈ່າຍຄ່າປິ່ນປົວສຸກເສີນໃຫ້ແທນທ່ານ.

ໂຄງການເມດິເຄດສາມາດຊ່ວຍຈ່າຍຄ່າໃນໃບເກັບເງິນ ທີ່ທ່ານໄດ້ຮັບລວມກັນເຖິງສາມເດືອນ ກ່ອນທ່ານຍື່ນໃບຄຳຮ້ອງ. ໂຮງໝໍຫລາຍແຫ່ງມີພະນັກງານສັງຄົມສົງເຄາະ ເຊິ່ງສາມາດຊ່ວຍ ເອົາໃບຄຳຮ້ອງເມດິເຄດໃຫ້ທ່ານໄດ້. ທ່ານສາມາດເຮັດຄຳຮ້ອງຂໍຮັບການຊ່ວຍເຫລືອ ຈາກເມດິເຄດໄດ້ ທີ່ຫ້ອງການຂອງກົມປະຊາສົງເຄາະ ບ່ອນໃດກໍໄດ້. ຈົ່ງໂທຣເບີ 1-800-972-2017 ເພື່ອຊອກເບິ່ງຫ້ອງການທີ່ຢູ່ໃກ້ທ່ານ.

ສຳລັບ ຂໍ້ມູນເພີ່ມເຕີມກ່ຽວກັບໂຄງການຕ່າງໆເຫລົ່ານີ້, ຈົ່ງເບິ່ງທີ່ເວັບໄຊການຊ່ວຍເຫລືອທາງກົດໝາຍຂອງຣັຖໄອໂອວາ*.

### ຂ້າພະເຈົ້າເປັນຄົນເຂົ້າເມືອງທີ່ມີລາຍໄດ້ຕ່ຳ. ມີໂຄງການໃດບໍ່ ທີ່ສາມາດຊ່ວຍເຫລືອຂ້າພະເຈົ້າໄດ້?

ມີ. ໂຮງໝໍຕ່າງໆຖືກກຳນົດວ່າ ຕ້ອງໃຫ້ການປິ່ນປົວໃນກໍລະນີສຸກເສີນແກ່ທ່ານ, ເຊັ່ນດຽວກັນກັບພົນລະເມືອງທົ່ວໄປ. ໂຄງການເມດິເຄດຍັງອາດຈ່າຍຄ່າໃຫ້ທ່ານ ສຳລັບການຮັບບໍລິການສຸກເສີນທີ່ດົນເຖິງສາມວັນ, ລວມເຖິງການອອກລູກ. ການຮັບການຊ່ວຍເຫລືອຈາກເມດິເຄດ ບໍ່ມີຜົນເສັຍຫາຍຫຍັງຕໍ່ໂອກາດຂອງທ່ານໃນການໄດ້ສັນຊາດເປັນພົນລະເມືອງ.



ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ ສິດທິຂອງຄົນເຂົ້າເມືອງໃນການຮັບເອົາການບໍລິການສຸຂະພາບແບບສຸກເສີນ ໃຫ້ເບິ່ງທີ່ເວັບໄຊການຊ່ວຍເຫລືອທາງກົດໝາຍຂອງຣັຖໄອໂອວາ*.

Iowa Legal Aid
ເຮັດວຽກເພື່ອຄວາມຍຸດຕິທັມ
ເບີໂທຣຟຣີ **(800) 272-0008**

## ຂ້າພະເຈົ້າສາມາດຮັບການຊ່ວຍເຫລືອຈາກຄາວຕີ້ໄດ້ບໍ່?

ຄາວຕີ້ຕ່າງໆໃນຣັຖໄອໂອວາຈະຕ້ອງຊ່ວຍເຫລືອປະຊາຊົນ ໂດຍໃຫ້ຈຳນວນເງິນບໍ່ຫລາຍ ຜ່ານໂຄງການຊ່ວຍເຫລືອທົ່ວໄປ (General Assistance program) . ແຕ່ລະຄາວຕີ້ມີກົດລະບຽບແຕກຕ່າງກັນ . ຄາວຕີ້ສ່ວນຫລາຍແມ່ນຢາກໃຫ້ທ່ານ ຂໍເອົາການຊ່ວຍເຫລືອຈາກໂຄງການຊ່ວຍເຫລືອທົ່ວໄປ ກ່ອນທ່ານໄປຮັບການບໍລິການປິ່ນປົວ . ທ່ານສາມາດຮຽນຮູ້ເພີ່ມເຕີມກ່ຽວກັບວ່າ ຄາວຕີ້ຂອງທ່ານສະໜອງການຊ່ວຍເຫລືອແນວໃດແດ່

ຈາກໂຄງການຊ່ວຍເຫລືອທົ່ວໄປ ໂດຍໃຫ້ທ່ານຕິດຕໍ່ທີ່ ຫ້ອງການໂຄງການການຊ່ວຍເຫລືອທົ່ວໄປ, ຄະນະກຳມະການຜູ້ຄວບຄຸມປະຈຳຄາວຕີ້, ຫລືຫ້ອງການຂອງກົມປະຊາສົງເຄາະ ໃນເຂດຂອງທ່ານ . ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ ໂຄງການການຊ່ວຍເຫລືອທົ່ວໄປຂອງຄາວຕີ້ ໃຫ້ເບິ່ງທີ່ເວັບໄຊການຊ່ວຍເຫລືອທາງກົດໝາຍຂອງໄອໂອວາ* .

## ການຊ່ວຍເຫລືອສຳລັບນັກຮົບເກົ່າເດ?

ນັກຮົບເກົ່າບາງຄົນທີ່ປົດປະຈຳການຕາມວາລະ ແລະຜົວຫລືເມັຍຂອງເຂົາເຈົ້າອາດມີເງື່ອນໄຂ ໄດ້ຮັບການຊ່ວຍເຫລືອສຳລັບນັກຮົບເກົ່າ ເພື່ອຊ່ວຍຈ່າຍໃບບິນເກັບຄ່າປິ່ນປົວ . ທ່ານສາມາດຂໍຮັບການຊ່ວຍເຫລືອຈ່າຍຄ່າປິ່ນປົວໄດ້ ຜ່ານຫ້ອງການສົງເຄາະ ສຳລັບນັກຮົບເກົ່າປະຈຳຄາວຕີ້ຂອງທ່ານໄດ້ .

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ ໂຄງການສົງເຄາະນັກຮົບເກົ່າ ໃຫ້ເບິ່ງທີ່ເວັບໄຊການຊ່ວຍເຫລືອທາງກົດໝາຍຂອງໄອໂອວາ* .

## * ເບິ່ງຂໍ້ມູນເພີ່ມເຕີມໄດ້ທີ່ເວັບໄຊການຊ່ວຍເຫລືອທາງກົດໝາຍຂອງໄອໂອວາ

ໄປທີ່ www.iowaleglaid.org ແລະເລືອກກ່ອງສີຟ້າ ທຳອິດທີ່ຢູ່ທາງຊ້າຍສຳລັບ “Legal Information and other Resources for Iowans” “ຂໍ້ມູນທາງກົດໝາຍ ແລະແຫລ່ງຊ່ວຍເຫລືອອື່ນສຳລັບຊາວໄອໂອວາ.” ຈາກນັ້ນໃຫ້ເລືອກຫົວຂ “Health” “ສຸຂະພາບ” ແລະໄປທີ່ຫົວຂໍ້ຍ່ອຍໃນ ລາຍການທີ່ສະແດງໄວ້ເພື່ອເບິ່ງຂໍ້ມູນເພີ່ມເຕີມແລະບ່ອນ ເຊື່ອມຕໍ່ໄປເວັບໄຊອື່ນໆທີ່ມີປະໂຫຍດ .

LSC